ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

# Lan Xang Literature

## Lecture 11:
## The Story of "Sinsay" (Con.)

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

# ບົດສອນ

**ວິຊາ:** ວັນນະຄະດີລ້ານຊ້າງ
**ລະຫັດ:** 0907409
**ບົດທີ 4:** ໜັງສືເລື່ອງ: "ສິນໄຊ" (ຕໍ່)
**ຜູ້ບັນຍາຍ:** ປທ. ສົມທະເພີຍ ສີວົງສັກ
**ປີ:** 3
**ພາກຮຽນ:** 2
**ສົກຮຽນ:** 2022-2023

ເວລາ: 90 ນາທີ

<table>
<tr><td colspan="2">ຂັ້ນຕອນ 1 - ຜົນຮັບທີ່ຕ້ອງການ (Desire Results)</td></tr>
<tr><td colspan="2">ສ້າງເປົ້າໝາຍ (Goals):<br>ນັກຮຽນຈະຮູ້:<br>- ການວິເຄາະຕົວລະຄອນໃນເລື່ອງ "ສິນໄຊ"</td></tr>
<tr><td>ຄວາມເຂົ້າໃຈ (Understand):<br>ນັກຮຽນຈະເຂົ້າໃຈ:<br>- ວິທີການວິເຄາະຕົວລະຄອນຕ່າງໆ</td><td>ຄຳຖາມຫຼັກ (Questions):<br>1) ຕົວລະຄອນສິນໄຊ ເປັນຄົນແນວໃດ?<br>2) ຕົວລະຄອນຍັກກຸມພັນ ເປັນຄົນແນວໃດ?<br>3) ຕົວລະຄອນນາງສຸມຸນທາ ເປັນຄົນແນວໃດ?</td></tr>
<tr><td>ຄວາມຮູ້ (Knowledge):<br>- ໃຫ້ນັກຮຽນຮູ້ໄດ້ເຖິງວິທີວິເຄາະ, ການເຄື່ອນໄຫວຕ່າງໆຂອງບັນດາຕົວລະຄອນພາຍໃນເລື່ອງ.</td><td>ທັກສະ (Skills):<br>- ອະທິບາຍໄດ້ເຖິງການເຄື່ອນໄຫວຂອງຕົວລະຄອນຕ່າງໆໃນເລື່ອງ.</td></tr>
<tr><td colspan="2">ຂັ້ນຕອນ 2 - ຫຼັກຖານປະເມີນ</td></tr>
<tr><td>ໜ້າວຽກສິດສອນ (Tasks):<br>- ສັງເກດການຄົ້ນຄວ້າຂອງນັກສຶກສາ<br>- ສົນທະນາຖາມ-ຕອບ<br>- ແນະນຳການຄົ້ນຄວ້າ.<br>- ໃບວຽກບ້ານ</td><td>ຫຼັກຖານອື່ນໆ (Other Evidence):<br>- ລາຍງານຜົນການຄົ້ນຄວ້າ<br>- ເນື້ອໃນຄຳຕອບກິດຈະກຳຂອງນັກສຶກສາ<br>- ການສັງຮວມກິດຈະກຳ<br>- ຜົນການກວດວຽກບ້ານ</td></tr>
<tr><td colspan="2">ຂັ້ນຕອນ 3 ແຜນການຮຽນ-ການສອນ (Teaching and Learning Plan)</td></tr>
<tr><td colspan="2">- ສື່ການສອນມີ:<br>ປຶ້ມຕຳລາວິຊາວັນນະຄະດີລ້ານຊ້າງ, ປຶ້ມຄຳກອນສັງສິນໄຊ, ເວັບໄຊ້ຂໍ້ມູນ, ຄອມພິວເຕີ, ເຄື່ອງສາຍ LCD.<br>- ກິດຈະກຳການຮຽນ<br>ທວນຄືນ ແລະ ລ້ຽວເຂົ້າສູ່ບົດຮຽນ:<br>- ທວນຄືນບົດຮຽນເກົ່າ</td></tr>
</table>

- ຄູນຳພານັກຮຽນທວນຄືນບົດຮຽນ ໂດຍໃຫ້ນັກຮຽນເວົ້າເຖິງໜັງສື ແລະເນື້ອໃນເລື່ອງ “ສິນໄຊ” ໂດຍຫຍໍ້.
- **ຂັ້ນລົງວເຂົ້າສູ່ບົດສອນ:**

**ບົດທີ 4**
**ໜັງສືເລື່ອງ: “ສິນໄຊ”**

**4.4 ການວິເຄາະຕົວລະຄອນໃນເລື່ອງ**

**ກ. ຕົວລະຄອນສິນໄຊ** (20 ນາທີ)

***ກິດຈະກຳ 1:***

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ
  1) ຕົວລະຄອນສິນໄຊ ເປັນຄົນແນວໃດ?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (15 ນາທີ)

ຕົວລະຄອນສິນໄຊ ນັກແຕ່ງບໍ່ໄດ້ຍ້ອງຍໍແຕ່ດ້ານຄຸນສົມບັດ ແລະ ຄວາມເປັນທຳເທົ່ານັ້ນ. ແຕ່ຍັງມີຫຼາຍດ້ານທີ່ນັກແຕ່ງຍ້ອງຍໍສັນລະເສີນຢ່າງເລິກເຊິ່ງ ແລະ ເຊື່ອງຊ້ອນຢູ່ເບື້ອງຫຼັງຕົວລະຄອນ, ນັ້ນແມ່ນຮູບພາບຂອງສັງຄົມປະກອບດ້ວຍຄົນທີ່ມີໃຈກາງແຕ່ລະຫວ່າງຄົນກັບຄົນ ກໍມີຄວາມຂັດແຍ້ງເປັນຈຸ້ມເປັນພວກ; ພວກໜຶ່ງດຳລົງຊີວິດດ້ວຍຄວາມບໍລິສຸດ ແລະພວກໜຶ່ງເປັນພວກກົງກັນຂ້າມ. ດັ່ງນັ້ນ, ການຕໍ່ສູ້ລະຫວ່າງສອງຝ່າຍຈຶ່ງເຖິງຂັ້ນເອົາເປັນເອົາຕາຍ ສະນັ້ນ, ຕົວລະຄອນສິນໄຊໄດ້ປາກົດອອກເພື່ອແກ້ໄຂຄວາມຂັດແຍ້ງໃນສັງຄົມ. ສ່ວນວ່າຕົວລະຄອນສິນໄຊນັ້ນແມ່ນຕົວລະຄອນຈິງໃນປະຫວັດສາດ ຫຼືບໍ່ນັ້ນ? ບັນຫານີ້ເປັນການຫຍຸ້ງຍາກທີ່ຈະກຳນົດໄດ້. ແຕ່ອີງໃສ່ເລື່ອງແລະທັດສະນະສ່ວນຕົວ, ຕົວລະຄອນຂອງສິນໄຊບໍ່ອາດມີຈິງ; ຖ້າມີກໍມີພຽງຕົວລະຄອນອຸດົມຄະຕິເທົ່ານັ້ນເພື່ອຕອບສະໜອງຄວາມປາຖະໜາ ຂອງວົງຕະກຸນ ແລະ ສັງຄົມ ຕົວຢ່າງ: ເວລາສິນໄຊກຳເນີດມາຈາກອຸທອນກໍເຫັນເປັນສິ່ງປະຫຼາດໃຈພໍແຮງແລ້ວ ດັ່ງຄຳກອນທີ່ວ່າ:

| | | |
|---|---|---|
| ເມື່ອນັ້ນ | ຕົນປະເສີດເຈົ້າ | ເຈຍລະຈາກສະເດັດຕາມ |
| | ທົງສິນສອນ | ດາບເລີຍລົງມື້ມ |
| | ລົວອາຢັ້ງມ | ໃນມືມີເດດ |
| | ພ້ອມຜາບມັ້ງນ | ເຕີນຊ້ຳຊ້ອຍອຳ (ສີລາ ວິຣະວົງ, 2512) |

ນັກແຕ່ງໄດ້ສ້າງຄວາມມະຫັດສະຈັນຕໍ່ຜູ້ອ່ານ, ສ້າງຄວາມເຊື່ອໝັ້ນຕໍ່ປະຊາລາສະດອນ, ຕົວຈິງແລ້ວຄົນເຮົາມີຄວາມຮູ້ຕ້ອງຜ່ານການເຝິກນຳຄູບາອາຈານ. ຮູບປະພັນສິນໄຊແມ່ນຮູບແບບໜຶ່ງຂອງບຸກຄົນອຸດົມຄະຕິຊົນຊັ້ນສັກດີນາ ເພາະຕົວລະຄອນໄດ້ເຄື່ອນໄຫວຕາມລະບຽບຂອງຊັ້ນຄົນດັ່ງກ່າວ, ຕົວລະຄອນສິນໄຊພຽບພ້ອມດ້ວຍຄຸນສົມບັດ, ຄວາມຈົງຮັກພັກດີຕໍ່ເຊື້ອຕະກຸນ, ກ້າຕັດສິນໃຈປະຕິບັດນ້າທີ່ນຳເອົາອາຄືນມາ ເຊິ່ງປຽບເໝືອນວ່ານັກວິລະຊົນໄດ້ສະຫຼະກາຍໃຈ ເພື່ອແລກເອົາສັນຕິພາບມາໃຫ້ປະເທດ, ເອົາຄວາມສຸກມາໃຫ້ປວງຊົນ. ຮູບພາບຂອງຕົວລະຄອນສິນໄຊເປັນຮູບພາບຂອງນັກວິລະຊົນຂອງຊົນຊັ້ນສັກດີນາທີ່ໄດ້ຜ່ານຜ່າຄວາມຫຍຸ້ງຍາກ. ເພື່ອສ້າງຜົນງານ

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

ໃຫ້ມີກຽດສະຫງ່ງາມ ແລະ ນະຄອນລາດດ້ວຍຄວາມຮຽກຮ້ອງຕ້ອງການຂອງອິງພະບິດາເມື່ອພະອິນສິ່ງລົງມາເກີດສິນໄຊຕ້ອງປະຕິບັດໜ້າທີ່.

ຄັນວ່າ ອິງປະສິງແຫ້ ທັງສາມບໍ່ມີຫຼີກ

ດິນ ແລະ ຟ້າ ລົງຂຶ້ນຂ່າວເລີງ ແລເດ (ສີລາ ວິຣະວົງ, 2512)

ສິນໄຊສູ້ກັບຍັກກຸມພັນກັນດານ, ໝູ່ຊ້າງ, ພະຍາທອນ, ສູ້ກັບຄວາມຫຼອກລວງຍົວະຂອງນາງຍັກຄີນີ, ແຕ່ທຸກເຫດການດັ່ງກ່າວ ທ້າວ ສິນໄຊ ໄດ້ເອົາຊະນະຕະຫຼອດ

ຜ່ານການທົດສອບເສັ້ນທາງເດີນຂອງສິນໄຊໄດ້ກ້າວເຂົ້າສູ່ເປົ້າໝາຍຕົວຈິງກັບຍັກກຸມພັນ ເພື່ອຍາດເອົານາງສຸມຸນທາ. ເມື່ອສິນໄຊເຂົ້າເຖິງເມືອງອະໂນລາດຂອງຍັກກຸມພັນໜ້າທີ່ທຳອິດຂອງທ້າວຄືເອົາອາອອກຈາກເມືອງອະໂນລາດ. ຈາກນັ້ນຈຶ່ງທຳການສູ້ຮົບເຊິ່ງບໍ່ແມ່ນເລື່ອງທີ່ງ່າຍດາຍເນື່ອງຈາກນາງ ສຸມຸນທາ ໄດ້ເກືອກກົ້ວສະໜິດຕິດພັນກັບຍັກກຸມພັນ (ສາມີ) ເປັນເວລາຫຼາຍປີແລ້ວ, ຄວາມຮັກຄວາມຖະໜອມລະຫວ່າງຜົວເມຍໄດ້ເຈືອຈານເຂົ້າໃນດວງໃຈຢ່າງເລິກເຊິ່ງ ແລະ ຍາກທີ່ຈະແຍກກັນໄດ້ ເວັ້ນແຕ່ການໃຊ້ອຳນາດມາບັງຄັບ. ແຕ່ທຳອິດ ສິນໄຊ ລະດົມໃຫ້ອາແຕ່ງເຄື່ອງຂອງອອກຈາກເມືອງອະໂນລາດໃນຂະນະທີ່ຍັກກຸມພັນ (ຜົວ) ບໍ່ຢູ່ນາງ ສຸມຸນທາເວົ້າວ່າ:

ໃຫ້ຫຼານ ຄືນຄອບໄທ້ ພະລາຊະບິຕາ ກ່ອນເຖີ້ນ

ອຳອາເສຍ ວ່າເດີນບໍ່ມີພໍ້

ບອກວ່າ ເຫຼືອແຮງຄົ້ນ ຄຸງເມືອງມານນາກ

ເຫວຮ່ອມຫ້ວຍ ຮຸນແລ້ວບໍ່ເຫັນ ວ່າເນີ (ສີລາ ວິຣະວົງ, 2512)

ການທີ່ນາງ ສຸມຸນທາ ບອກໃຫ້ສິນໄຊ (ຫຼານ) ໄປຕົວະອ້າຍຂອງນາງນັ້ນກໍເນື່ອງຈາກວ່ານາງບໍ່ຢາກກັບເມືອບ້ານ (ເປັງຈານ) ເພາະບໍ່ຢາກປະຜົວຈຶ່ງໃຊ້ຄວາມລໍ້ລວງຫຼານເພື່ອແກ່ເວລາລໍຖ້າກຸມພັນກັບມາ. ເມື່ອກຸມພັນກັບມາແລ້ວພັດລໍຖ້າໃຫ້ຍັກກຸມພັນຕື່ນມາຕໍ່ສູ້ກັບຫຼານ.

ເຫດການທີ່ຍົກຂຶ້ນມາຂ້າງເທິງພິສູດໃຫ້ພວກເຮົາເຫັນອີກເທື່ອໜຶ່ງວ່າ ສຸມຸນທາບໍ່ຢາກຕັດຂາດຄວາມຮັກຜົວເມຍດ້ວຍກັນຕໍ່ສະຖານະການທີ່ ສິນໄຊ ໃຊ້ມາດຕາການບັງຄັບດ້ວຍອຳນາດໃຫ້ນາງອອກເມືອງນັ້ນກໍແມ່ນຄວາມເດັດຂາດຂອງສິນໄຊຈະຕ້ອງປະຕິບັດ ແຕ່ກໍບໍ່ແມ່ນຄວາມຮຸນແຮງທີ່ແຂງກະດ້າງ ແລະ ຜະເດັດການເໜືອຄວາມຈິງ.

ຄຳແຫ່ງນ້ອຍ ຫຼານໜ່ອມມີຖື ແລ້ວລື

ສັງມາແຂງຄວາມຈັກ ຢູ່ດົນດອມເສື້ອ

ຫຼານຈັກຕັດຫົວຫື້ອ ເມືອທູນເທວະລາດ

ໄວ້ຄາບຄ້າງ ດອມເສື້ອສວ່າງເວນ ທ່ານແລ້ວ. (ສີລາ ວິຣະວົງ, 2512)

ຍ້ອນຄວາມຢ້ານກົວຕໍ່ອຳນາດສິນໄຊ, ນາງ ສຸມຸນທາຈຶ່ງຕ້ອງເອົາມືເຊັດນໍ້າຕາຈາກສາມີໄປ, ແຕ່ສ່ວນເລິກຂອງຫົວໃຈນາງບໍ່ຢາກຫ່າງເຫີນຈາກສາມີແມ່ນແຕ່ບາດກ້າວດຽວ. ເວລາໃດນາງກໍຊອກທຸກໂອກາດໃຫ້ນາງໄດ້ຢູ່ຄຽງຂ້າງສາມີ, ຫາທຸກເງື່ອນໄຂ ເພື່ອຕົວະຍົວະຫຼອກລວງຫຼານວ່າ: ລືມຊ້ອງ, ລືມໄມ້ຂັດເກົ້າ ແລະ ຜ້າແຜ່ນສະໄບ. ຕົວຈິງແມ່ນນາງຢາກກັບມາຫາສາມີປຸກສາມີຕື່ນນອນໄປຕໍ່ສູ້ກັບ ສິນໄຊ ເພື່ອຍາດຕົນເອງກັບຄືນ.

ລຸກໆຖ້ອນ ຊິງຍາດເອົາອອນ ແດ່ແມ

ຮຽມບໍ່ມີໃຈຄຶດ ໄຄ່ເມືອເມືອງບ້ານ

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

ຄຶດເມື່ອເຈົ້າຮັກນ້ອງ ພົ້ນຍິ່ງແສນຖະນັດ
ກໍບໍ່ມີຄໍາທຸກ ແດດຝົນບໍ່ມີຮູ້ (ສີລາ ວີຣະວົງ, 2512).

ເມື່ອເອົາອາອອກຈາກກໍາມືຂອງກຸມພັນແລ້ວ, ສິນໄຊ ແລະ ສັງທອງ ໄດ້ປະຈັນບານກັບກຸມພັນ, ກ່ອນອື່ນໝົດສິນໄຊໄດ້ປຸກໃຫ້ກຸມພັນຕື່ນຈາກນອນດ້ວຍການເອົາດາບຕັດຄໍທັງສອງຄັ້ງ. ກຸມພັນຕື່ນຈາກບ່ອນນອນນັບແຕ່ກຸມພັນຕົວດຽວກາຍເປັນເຈັດຕົວ, ກາຍເປັນສີ່ສິບເກົ້າ ແລະ ພັນແປດຮ້ອຍຕົວແລ້ວຍົກທັບມາຕີສິນໄຊ.

ແຕ່ສິນໄຊ ແລະ ສັງທອງກໍບໍ່ຫວັ່ນກົວ ແລະ ຍັງໄດ້ຕ້ານຄືນກັບຍັກກຸມພັນຕັ້ງຫຼາຍຫຼີບຫຼາຍຕ່າວເຖິງວ່າຈະມາດ້ວຍຫຼາຍຮູບການກໍຕາມ.

ຍັກກຸມພັນສູ້ຕົວດຽວບໍ່ໄຫວຈຶ່ງເຂົ້າໄປຂວາງຫິມະພານເພື່ອຮຽກໂຮມເອົາບໍລິວານພ້ອມດ້ວຍໂຄດວົງເຊື້ອຕະກຸນມາຊ່ວຍເພື່ອຕ້ານເສິກບ້ານເມືອງເປັງຈານ, ສະນັ້ນພວກຍັກໂຂທັງຫຼາຍທີ່ເປັນບໍລິເວນເມື່ອໄດ້ຍິນຄໍາສັ່ງຂອງກຸມພັນແລ້ວກໍພ້ອມກັນລຸລັ່ງທັ່ງເທເຂົ້າມາຢ່າງຫຼວງຫຼາຍ

ຕົວໜຶ່ງຊື່ວ່າ ລືກຽນກ້າ ເພັດສະໄຖຸມໝູ່
ຕົວໜຶ່ງຊື່ວ່າໄກ່ສີກ້າ ໂຍທາຫິງໂກດ
ຕົວໜຶ່ງຊື່ວ່າໄຖສີຕັ້ງປີກຊ້າຍ ແຂງຂື່ມໂຍທາ
ອັນວ່າ ໄວຍະເວດໃຫ້ ໄປຜໍ່ພິນຫານ
ໃຜບໍ່ທໍາເປັນມື ຂ້າເສຍຍາໄວ້… (ສີລາ ວີຣະວົງ, 2512).

ເມື່ອກຽມກໍາລັງແລ້ວຂຸນຍັກກໍພ້ອມກັນເຄື່ອນໄຫວຍັກນາບຄູ່ ແລະ ບຸກໂຈມຕີສິນໄຊ, ສັງທອງຢ່າງດຸເດືອດ.

ຕໍ່ກໍາລັງຂອງຍັກມານທັງຫຼາຍນັ້ນສິນໄຊ ແລະ ສັງທອງບໍ່ໄດ້ຫວັ່ນໄຫວ, ພວກຍັກຍິ່ງເຂົ້າມາຫຼາຍເທົ່າໃດກໍຍິ່ງດັບສູນກ້ຽງເທົ່ານັ້ນ.

ພວກຍັກເຕົ້າໂຮມກໍາລັງເທື່ອແລ້ວເທື່ອເຫຼົ່າຖ້າຈະກັບຄືນກໍຢ້ານກຸມພັນຕັດຫົວ. ດັ່ງນັ້ນ, ຍັກພີ່ນ້ອງໄຖສີ ແລະ ເພັດສະໄຖຈໍາເປັນຕ້ອງຕໍ່ສູ້ກັບສິນໄຊ ແລະ ສັງທອງຈົນກ່ວາສິ້ນລົມຫາຍໃຈ, ໄຖສີປອມຕົວເປັນເດັກນ້ອຍທີ່ໜ້າຮັກຄື ສິນໄຊເພື່ອຫວັງຈະເຂົ້າຫາສິນໄຊແລ້ວຍຶດເອົາອາວຸດ, ແຕ່ສິນໄຊມີສະຕິ ແລະ ຮູ້ເລ່ກົນມານຍາຂອງມັນແລ້ວ:

ທ້າວຖອດເປື້ອງ ຄໍຂາດສອງທີ
ສັງທອງຂີບ ແຕກຕົນຕາຍມ້ຽນ
ມັນກໍມ້ຽນຊົ່ວຊໍ້າ ຕາຍເມື່ອວັນແລງ
ເຄັ່ງເຄັ່ງພົນ ພາກຄືນຄາງປ້ານ (ສີລາ ວີຣະວົງ, 2512).

ເປັນອັນວ່າໃນບັ້ນຮົບ “ອະນຸຍຸທະກໍາ” ນີ້ດ້ວຍການປະສານແຮງກາຍ ແລະ ໃຈລະຫວ່າງສອງພີ່ ນ້ອງສິນໄຊ ສັງທອງໄດ້ຮັບໄຊຊະນະຢ່າງສົມກຽດ ແລະ ກຽມຈິດໃຈເຂົ້າບັ້ນຮົບອີກຕໍ່ໄປ.

ຕໍ່ກັບກໍາລັງຫຼວງຂອງກຸມພັນທີ່ກ່າວມາຂ້າງເທິງນີ້, ສິນໄຊບໍ່ຄິດທໍ້ຖອຍໃຈເມື່ອພວກຍັກກຸມພັນມາຮາວີຄືແນວນັ້ນສິນໄຊພ້ອມດ້ວຍພີ່ນ້ອງລົງມືເຮັດໜ້າທີ່ຂອງໃຜມັນ.

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

ຫຼັງຈາກການຕໍ່ສູ້ປະຈັນບານຈົບລົງແລ້ວ, ສິນໄຊໄປນຳເອົານ້ອງສາວຊື່ ສີດາຈັນຢູ່ເມືອງນາກຕາມຄຳຮ້ອງຂໍຂອງອາ, ກ່ອນອື່ນທ້າວໄດ້ຫຼິ້ນການພະນັນກັບພະຍານາກ; ຖ້າພະຍານາກຊະນະຈະມອບດາບສີຄັນໄຊໃຫ້, ຖ້າບໍ່ຊະນະຈະມອບບ້ານເມືອງໃຫ້ແຕ່ການພະນັນຕັ້ງສາມຄັ້ງພະຍານາກກໍບໍ່ຊະນະ, ພະຍານາກພະ ຍາມລົບລີ້ນປີ້ນຄວາມບໍ່ຍອມປະຕິບັດ, ແຕ່ສິນໄຊຮ້ອງຂໍເອົານາງສີດາຈັນກັບໄປກໍພໍ. ສ່ວນພະຍານາກຄຽດແຄ້ນທີ່ໄດ້ຍິນແນວນັ້ນ ຈຶ່ງເອົາກຳລັງປິດລ້ອມເພື່ອຫວັງເອົາສິນໄຊໄປຂັງ.

ເທື່ອນີ້ສິນໄຊບໍ່ລົງມືໂດຍກົງ ສິນໄຊໄດ້ຂຽນສານສົ່ງເຖິງພະຍາຄຸດໃຫ້ມາຊ່ວຍພະຍາຄຸດກໍຕອບສະໜອງ ແລະ ໄດ້ຍົກກຳລັງມາຫາສິນໄຊຢ່າງຮີບດ່ວນ.

| | |
|---|---|
| ເຂົາກໍກຸມເອົາມ້ຽນ | ເມືອຖວາຍຄຸດທະລາດ |
| ທ້າວໃຫຍ່ເຍື້ອນ | ກັນກ້ຽວຂາດຄໍ |
| ນັບແຕ່ກຸມເປັນໄດ້ | ແສນຕົວນາກໝຸ່ມ |
| ຄຸດກໍຄຸມຄາບຖ້ອນ | ຖວາຍທ້າວທີ່ສະນາມ (ສີລາ ວີຣະວົງ, 2512). |

ພະຍານາກເປັນຜູ້ປະລາໄຊໃນສົງຄາມ ພະຍານາກຈຶ່ງຍອມຖວາຍຕົນເປັນຂ້ອຍຂ້າ ແລະ ຍອມມອບທຸກຢ່າງໃຫ້ແກ່ສິນໄຊ. ເມື່ອສິນໄຊ ໄດ້ນ້ອງສາວຈຶ່ງກັບເມືອງເປັງຈານ. ບົນເສັ້ນທາງກັບຄືນເມືອນັ້ນ ສິນໄຊຂາດສະຕິ, ຖືກພວກທ້າວທັງຫົກຫັກຫຼັງລອບຂ້າເພື່ອຍາດແຍງຜົນງານ.

| | |
|---|---|
| ແຕ່ນັ້ນ ເວລາຮ້າຍ | ຈຳຈອນພູວະນາດ |
| ເຂົາກໍປັດກິ່ງກ້ອນ | ຄຳລ້ານໃສ່ເຫວ |
| ຄີງກົມກິ້ງ | ນຳແປວນຳທັ້ງ |
| ພູວະນາດກັ້ນ | ໃຈນ້ອຍມອດມົວ (ສີລາ ວີຣະວົງ, 2512). |

ເມື່ອສິນໄຊຖືກທ້າວທັງຫົກຊຸກລົງເຫວ, ທ້າວທັງຫົກກໍພາອາ ແລະນາງສີດາຈັນກັບເມືອງເປັງຈານ ແລະ ໄດ້ຮັບການຕ້ອນຮັບຢ່າງຄຶກຄື້ນຈາກອົງພະບິດາ, ມີແຕ່ນາງສຸມຸນທາເທົ່ານັ້ນໂສກເສົ້າຫງ່ອມເຫງົາຍ້ອນຫຼານ (ສິນໄຊ) ບໍ່ໄດ້ມາພ້ອມ. ເຖິງຢ່າງໃດກໍຕາມການທີ່ອາ ສຸມຸນທາ ໄດ້ກັບຄືນເມືອງເປັງຈານນັ້ນແມ່ນຜົນງານຂອງສິນໄຊໂດຍມີສີໂຫ ແລະ ສັງທອງເປັນກຳລັງຊ່ວຍ, ສິນໄຊສາມາດຜ່ານອຸປະສັກອັນທຸລະກັນດານ ແລະ ໄດ້ຕາມຄວາມມຸ່ງມາດປາຖະໜາ, ຜົນງານທີ່ສິນໄຊຍາດມາໄດ້ຕົວລະຄອນສິນໄຊໄດ້ຍົກຍ້ອງເປັນຜູ້ເກັ່ງກ້າສາມາດ, ເປັນຮູບແບບບຸກຄົນອຸດົມຄະຕິຂອງຊົນຊັ້ນສັກດີນາມີຄຸນປະໂຫຍດ, ປະຊາຊົນເມືອງເປັງຈານໃຜກໍຊົມຊື່ນ ແລະ ຮັກແພງນັບຖືຈາກນັ້ນຕໍ່ມາສິນໄຊກໍໄດ້ສະເຫວີຍລາຊະສົມບັດແຫ່ງເປັງຈານນະຄອນລາດ.

| | |
|---|---|
| ປະເວນີນັ້ນ | ປັດສົມໄວວຽນຮອດ |
| ລູກສືບສ້າງ | ແທນເຊື້ອຊອບທຳ ແທ້ແລ້ວ (ສີລາ ວີຣະວົງ, 2512). |

ຕົວລະຄອນສິນໄຊເປັນຕົວລະຄອນສິນທຳ, ນັກແຕ່ງໄດ້ສ້າງຮູບພາບຂຶ້ນມາເພື່ອສ່ອງແສງລະບອບສັກດີນາສະເພາະເຫັນວ່າຢູ່ໃນສັງຄົມສະໄໝນັ້ນບໍ່ມີລະບອບໃດຈະດີກວ່າລະບອບສັກດີນາປະຊາລາຊະດອນມີຄວາມມຸ່ງມາດປາຖະໜາໃຫ້ມີຜູ້ປົກຄອງທີ່ດີເພື່ອເປັນທີ່ເພິ່ງໃຫ້ໄພ່ຟ້າປະຊາຊົນ.

**ຂ. ຕົວລະຄອນຍັກກຸມພັນ** (20 ນາທີ)

**ກິດຈະກຳ 2:**

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ

1) ຕົວລະຄອນຍັກກຸມພັນ ເປັນຄົນແນວໃດ?

- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (15 ນາທີ)

ຍັກກຸມພັນແມ່ນຕົວລະຄອນໜຶ່ງໃນຕົວລະຄອນອະທຳ, ນັກແຕ່ງໄດ້ສ້າງຕົວລະຄອນນີ້ຂຶ້ນມາດ້ວຍຄວາມແປກປະຫຼາດມີຮູບຮ່າງໃຫຍ່ໂຕມະໂຫຖານ, ມີລິດເດດເກັ່ງກ້າດ້ານສາດຕະສິນອາຄົມ, ສາມາດເຫາະເຫີນເດີນອາກາດ, ຮູບພາບຂອງຍັກກຸມພັນປາກົດຕົວອອກດ້ວຍຄວາມໂຫດຮ້າຍປ່າເຖື່ອນລັກເອົາມະນຸດໄປເປັນອາຫານ ຫຼືລັກເອົາຂອງເພິ່ນໄປເປັນຂອງຕົນເອງຢ່າງຜິດຫຼັກສິນທຳ.

ຕົວລະຄອນຍັກກຸມພັນປາກົດອອກໃນເລື່ອງ "ສິນໄຊ" ຫຼື ບັນດາໃນໜັງສືເລື່ອງວັນນະຄະດີສະໄໝສັກດີນາແມ່ນເປັນສິ່ງເຂົ້າໃຈຍາກສົມຄວນ, ສຳລັບການຮຽນ-ການສອນໂດຍສະເພາະແມ່ນຕົວລະຄອນຍັກກຸມພັນໃນເລື່ອງສິນໄຊ. ພວກເຮົາຕັ້ງບັນວ່າ "ຕົວລະຄອນກຸມພັນ" ແມ່ນຜີ ຫຼື ມະນຸດ ທີ່ມີການຕໍ່ສູ້ຕ້ານພະຍາເພາະກຸມພັນເປັນຜູ້ເກັ່ງກ້າທາງດ້ານສາດຕະສິນອາຄົມພໍເທົ່າໆກັບສິນໄຊ. ຖ້າຕີລາຄາທາງດ້ານ "ຈິດຕະສາດ" ເຫັນວ່າກຸມພັນກໍນັບວ່າມີຄວາມສະຫຼາດບໍ່ໜ້ອຍກວ່າສິນໄຊ. ສະແດງອອກໃນການນຳສຸມຸນທາໄປຢູ່ນຳ, ນາງສຸມຸນທາບໍ່ຈັກວ່າຮ້າຍດ່າ, ສາບແຊ່ງຕ່າງໆນາໆແຕ່ກຸມພັນບໍ່ໃຊ້ຜະເດັດການຕໍ່ນາງ, ກຸມພັນເລົ້າໂລມດ້ວຍອາດເອົ້າອ່ອນຫວານຈົນນາງຕາຍໃຈນຳຄວາມດີຂອງກຸມພັນເມື່ອມີພະຍານຮັກອອກວ່າເປັນສິ່ງພິສູດເຖິງຜົນສຳເລັດໃນຄວາມສາມາດຂອງກຸມພັນໃນສ່ວນໜຶ່ງ.

ເມື່ອນັ້ນກຸມພັນເສົ້າ ໂລມນາງໃນອາດ
ໂຊມໂຊ່ເຖົ້າ ຖະໜອມແກ້ວກ່ອມຂວັນ
ພີ່ບໍ່ມີປະໂຫຍດດ້ວຍ ເປັນເຫຍື່ອອາຫານ
ພີ່ຈັກປຸນເປັນອິງ ເອກໂທນທັນອ້າງ
ພີ່ຈັກຍົກອ່ອນຂຶ້ນ ເປັນອ້າງເອກໂທນ ແທ້ແລ້ວ
ພີ່ຈັກອາສາຂັນ ຂາດເອງເອົາໄດ້
ຊື່ວ່າຄຳທຸກສິ້ມ ສິນທະນາໃນໂລກ
ພີ່ບໍ່ໃຫ້ຮຸ່ງຮູ້ ຄຳຮ້ອນຮອດອອນ ພີ່ແລ້ວ (ສີລາ ວີຣະວົງ, 2512).

ກຸມພັນສາມາດໂອບອ້ອມນາງ ສຸມຸນທາຕາມເຫດຜົນກ່ຽວກັບການເອົານາງມານັ້ນບໍ່ແມ່ນເອົາມາກິນເປັນເຫຍື່ອອາຫານຄືນາງຄິດແຕ່ເອົານາງມາເປັນເອກມະເຫສີ, ໃນທີ່ສຸດກຸມພັນເປັນຜູ້ຊະນະໃຈນາງ, ນາງກໍເຂົ້າໃຈ ແລະ ຮັບສາລະພາບຕໍ່ກຸມພັນ; ຖ້າຈະເວົ້າຕາມຄວາມເຊື່ອແລ້ວດ້ານໜຶ່ງກໍຍ້ອນໂຊກຊະຕາວາດສະ ໜາຈ່ອງກັນມາແຕ່ກຳເນີດ.

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

ຮູ້ວ່າ ແນນນຳກ້ຽວ ກັນລິງລຳຕ່າງ ຈິງລື
ບັດນີ້ໄກໂຄດເຊື້ອ ລືຫ້າມຫ່ອນເປັນ
ຕາມຊ່າງໄວ້ ມັນປຸກເປັນຫຼັກ
ວ່າຈັກຂີນຄຳລື ຫ່ອນເປັນປາງນີ້
ເມື່ອນັ້ນ ກຸມພັນທ້າວ ຖະໜອມນາງໃນອາດ
ຄືຄູ່ໄຟພ່າງເຜີ້ງ ຂາງໃກ້ເຊື່ອມໄຫຼ (ສີລາ ວິຣະວົງ, 2512).

ດັ່ງນັ້ນ, ນາງສຸມຸນທາຈິ່ງກາຍເປັນມະເຫສີຂອງຍັກກຸມພັນເມື່ອທັງສອງມີພະຍານຮັກກໍຍິ່ງເພີ່ມຄວາມຮັກ, ຄວາມອົບອຸ່ນໃນອ້ອມເອິກເຊິ່ງກັນ ແລະ ກັນຍິ່ງກວ່າເວລາໃດໝົດ ແລະ ບໍ່ສາມາດແຍກອອກຈາກກັນໄດ້. ຄວາມຮັກດັ່ງກ່າວເກີດຂຶ້ນຍ້ອນຄວາມເອົາອົກເອົາໃຈຂອງກຸມພັນຈົນເຮັດໃຫ້ສຸມຸນທາລືມຊາດຕະກຸນ, ລືມເຖິງບ້ານເກີດເມືອງນອນ ເພິ່ງພໍໃຈໃນຄວາມສະໜຸກສະໜານທີ່ກຸມພັນມອບໃຫ້. ເຫດການນີ້ສ່ອງແສງໃຫ້ພວກເຮົາເຫັນວ່າຕົວລະຄອນກຸມພັນກິ້ງເກືອກລີເລືອຈົນມາຮອດພະລາດຊະວັງທີ່ຕົນຢູ່ເມືອງອະໂນລາດເພື່ອຈະໄດ້ຄຽງຂ້າງກັບນາງມະເຫສີ ວິນຍານຂອງຍັກກຸມພັນຈຶ່ງຂຶ້ນສະຫວັນຊັ້ນຟ້າໄດ້.

ອັນວ່າຂອນຜີທ້າວ ກຸມພັນພູວະນາດ
ຍັງເກືອກກິ້ງ ກຳກ້າວໄປ່ວາຍ
ເຖິງທີ່ຜາສາດແກ້ວ ໂຮງລາດຮຽງນາງ
ກໍຈິ່ງມໍລະນາມຸດ ມອດພະໄທທັນນັ້ນ (ສີລາ ວິຣະວົງ, 2512).

ໃນບາງຕອນຂອງເລື່ອງທີ່ສະແດງໃຫ້ເຮົາເຫັນຂ້າງເທິງນີ້, ແມ່ນສະແດງເຖິງຄວາມຮັກຂອງຍັກກຸມພັນຕໍ່ນາງສຸມຸນທາເຊິ່ງບໍ່ມີຫຍັງໃນໂລກຈັກກະວານນີ້ມາປຽບໄດ້ນັບທັງກຸມພັນມີຊີວິດຈົນເຖິງນາທີສຸດທ້າຍກຸມພັນໄດ້ອອກເຫື່ອເທແຮງທັງກາຍ ແລະໃຈເພື່ອຄວາມຮັກ. ດັ່ງນັ້ນ, ການທີ່ສິນໄຊຈະມາເອົາອາກັບຄືນເມືອງເປັງຈານໂດຍຕັດແຍກຈາກຍັກກຸມພັນແມ່ນເປັນໄປບໍ່ໄດ້, ເພາະຄວາມຮັກຂອງກຸມພັນເກີດກ່ອນສິນໄຊ, ສະນັ້ນ, ຄວາມຮັກຂອງກຸມພັນກັບນາງສຸມຸນທາມັນຈິ່ງອຳມະຕະກວ່າຢູ່ໃນວົງຕະກຸນ. ເມື່ອສິນໄຊກະທຳຕໍ່ກຸມພັນເຊັ່ນນັ້ນກຸມພັນກໍຕ້ອງໄດ້ໃຊ້ຄວາມຮຸນແຮງປະຈັນບານເພື່ອປົກປ້ອງສິ່ງທີ່ຕົນຫວງແຫນຢູ່ໃນສະພາບເຊັ່ນນີ້ບໍ່ວ່າໃຜໆກໍອາດຈະຍອມຈຳນົນບໍ່ໄດ້ງ່າຍໆ. ຈາກປາກົດການນີ້ມັນກໍເປັນການສ່ອງແສງໃຫ້ເຮົາເຫັນເຖິງຄວາມຮຽກຮ້ອງຕ້ອງການຄວາມຮັກ, ຄວາມສຸກຂອງພັນລະຍາສາມີທີ່ບໍ່ມີພົມແດນ ແລະ ບໍ່ມີຊິ້ນຊັ້ນວັນນະໃນສັງຄົມ.

ເມື່ອເວົ້າເຖິງການເຄື່ອນໄຫວຕ່າງໆກໍອາດເວົ້າໄດ້ວ່າ ກຸມພັນມີຄວາມແຕກຕ່າງກັບສິນໄຊເມື່ອຈະທຽບກັນແລ້ວ, ກຸມພັນກຸ້ມຕົນເອງ, ແຕ່ສິນໄຊມີຜູ້ອຸປະຖຳແຕ່ຕົ້ນຕະຫຼອດປາຍ. ບັນຫານີ້ເປັນການສະແດງໃຫ້ເຫັນວ່າຄວາມເປັນສິນທຳແມ່ນປາກົດການໜຶ່ງທີ່ສະແດງອອກຢ່າງຈະແຈ້ງ ແລະ ຍາມໃດກໍຊະນະຄວາມອະທຳ. ເມື່ອເປັນແນວນີ້ກໍໝາຍຄວາມວ່າຕົວລະຄອນກຸມພັນແມ່ນຕົວແທນຕົວລະຄອນອະທຳທີ່ບໍ່ແມ່ນມະນຸດໂດຍກົງ, ຄວາມອະທຳດັ່ງກ່າວນີ້ສະແດງອອກແຈ້ງໃນການກະທຳຂອງຍັກກຸມພັນຄື: ລັກເອົານາງສຸມຸນທາໄປເປັນມະເຫສີໂດຍທີ່ບໍ່ໄດ້ສູ່ຂໍຕາມຮີດຄອງປະເພນີຖືວ່າຜິດພາດບໍ່ສາມາດອະໄພໂທດໃຫ້; ການທີ່ນັກແຕ່ງສ້າງຮູບພາບກຸມພັນ ແລະສິນໄຊກົງກັນຂ້າມກັນເພື່ອໃຫ້ມະໂນພາບຂອງຄວາມເປັນທຳ ແລະ ສິນທຳເດັ່ນຊັດຂຶ້ນໃນສັງຄົມ.

ດັ່ງນັ້ນ, ເມື່ອພະຍາສຸວັນລີງມາໂພດເອົາກຸມພັນຄືນມາກຸມພັນຍັງບໍ່ລືມສຸມຸນທາຈຶ່ງກັບໄປເມືອງເປັງຈານເພື່ອເອົາສຸມຸນທາ, ສີດາຈັນ ແລະ ຈັບເອົາສິນໄຊໄປເມືອງອະໂນລາດແລ້ວໃສ່ຄອກເຫຼັກໄວ້. ຈາກນັ້ນ, ສົງຄາມກໍລະເບີດຂຶ້ນອີກໂດຍບໍ່ມີໃຜຊະນະໃຜ; ພະອິນຈຶ່ງລົງມາຫ້າມ ແລະ ບອກໃຫ້ກຸມພັນຕ້ອງໄປສູ່ຂໍ ແລະ ແຕ່ງແປງເອົາສຸມຸນທາຕາມຮີດຄອງບ້ານເມືອງ, ສ່ວນພະຍາກຸດສະລາດບໍ່ຢາກຍອມຮັບເອົານ້ອງເຂີຍເປັນເຊື້ອສາຍແຫ່ງຍັກຈຶ່ງວາງເງື່ອນໄຂເພື່ອໃຫ້ກຸມພັນປະຕິເສດ, ແຕ່ກຸມພັນບໍ່ປະຕິເສດ ແລະຍອມປະຕິບັດທຸກຢ່າງ. ຈາກນັ້ນສາຍພົວພັນລະຫວ່າງກຸມພັນກັບພະຍາກຸດສະລາດ ແລະເມືອງອະໂນລາດ (ເມືອງຍັກ) ກັບເມືອງເປັງຈານຈຶ່ງເປັນໄປດ້ວຍດີທຸກປະການຕະຫຼອດໄປ.

ດັ່ງນັ້ນ, ຖ້າເບິ່ງຢ່າງໜຶ່ງ, ຕົວລະຄອນຍັກກໍອາດເປັນຮູບປະພັນຂອງຊາວຜູ້ອອກແຮງງານທີ່ມີຄວາມເກັ່ງກ້າສາມາດ, ມີກຳລາວັງຊາ, ສາມາດຕ້ານກັບຊົນຊັ້ນປົກຄອງທີ່ຂາດຄວາມສາມາດແຕ່ຍ້ອນເງື່ອນໄຂບໍ່ອຳນວຍຈຶ່ງຖືກຕິຖອຍ. ການຂັດແຍ່ງລະຫວ່າງກຸມພັນກັບສິນໄຊ ແລະ ລະຫວ່າງສອງຕົວເມືອງທີ່ມີຄວາມເຂັ້ມແຂງພໍໆກັນໃນໄລຍະນັ້ນ ແລະ ກໍແມ່ນຄວາມຂັດແຍ່ງກັນຈຶ່ງເອີ້ນ ຝ່າຍກົງກັນຂ້າມຝ່າຍໃດຝ່າຍໜຶ່ງວ່າ (ຍັກ). ແຕ່ຄຳວ່າຍັກກໍເປັນພຽງແຕ່ນາມມະທຳທີ່ຖືກສ້າງຂຶ້ນມາເພື່ອເປັນຮູບປະທຳຕາມຄວາມສຳນຶກຂອງຝ່າຍໃດຝ່າຍໜຶ່ງເພື່ອເອົາຊະນະກັນ.

**ຄ. ຕົວລະຄອນນາງສຸມຸນທາ** (15 ນາທີ)

<u>**ກິດຈະກຳ 3:**</u>

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ

1) ຕົວລະຄອນນາງສຸມຸນທາ ເປັນຄົນແນວໃດ?

- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (10 ນາທີ)

ນາງ ສຸມຸນທາກໍແມ່ນເຊື້ອກະສັດອົງໜຶ່ງເຊິ່ງເປັນມິ່ງຂ້ວນຂອງຊາວເມືອງເປັນຈານ, ຊາວເມືອງເປັນຈານທຸກທົ່ວໜ້າໃຜໆກໍຮັກແພງເຄົາລົບນາງ ເມື່ອນາງໄດ້ພັດພາກຈາກໄປເຮັດໃຫ້ພະຍາກຸດສະລາດ (ອ້າຍ) ຕະຫຼອດເຖິງປະຊາລາຊະດອນພ້ອມດ້ວຍສັດສາວາສິ່ງພຶດພັນຕ່າງໆ ທີ່ນາງເຄີຍໄດ້ໃກ້ສິດກໍພອຍໂສກເສົ້າຫງ່ວມເຫງົາ, ອາໄລອາວອນໄປຕາມໆກັນ. ບັນຫານີ້ອາດເປັນຍ້ອນຄຸນງາມຄວາມດີ, ຄວາມສະໜິດສະໜົມຂອງນາງທີ່ມີຕໍ່ປະຊາຊົນເມືອງເປັງຈານ.

| | | |
|---|---|---|
| ແມ່ນວ່າ | ສັບພະສິ່ງຊ້າງ | ມ້າມິ່ງໃນນະຄອນ ກໍດີ |
| | ກໍບໍ່ກິນກຽງກັດ | ຢູ່ຊົງຊະລອນພ້ອມ |
| | ກັບທັງເນື້ອນົກລ້ຽງ | ປະທິດຫຽນທົງເທບ ກໍດີ |
| | ຂົວຂໍ່ຂຸ້ມ | ກະທາກົ້ກ່າງຍຸງ |
| | ເຂົາແຂກແກ້ວ | ປຸນປາກສອນສຽງ ກໍດີ |
| | ສັງກາຈິບ | ຈາບເມືອງໃນຮ້ານ |
| | ກໍບໍ່ຮີຮ່ຳຮ້ອງ | ເຣສຽງສະງັດຢູ່ (ສີລາ ວີຣະວົງ, 2512). |

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

ນາງສຸມຸນທາ ແມ່ນສະຕີຜູ້ໜຶ່ງເປັນກະສັດແຕ່ມີຄວາມຮັກອັນບໍລິສຸດຕໍ່ຕະກຸນ, ຕໍ່ໄພ່ຟ້າຂ້າແຜ່ນດິນ; ເມື່ອນາງໄດ້ໄປເປັນເອກມະເຫສີຂອງກຸມພັນແລ້ວ, ນາງກໍຮັກແພງ ແລະ ສັດຊື່ບໍລິສຸດຕໍ່ສາມີ, ຮັກສາມີ ແລະ ລູກເໝືອນກັບຮັກຕົນເອງ. ຄວາມຮັກ-ຄວາມບໍລິສຸດຂອງນາງ ສຸມຸນທາສ່ອງແສງຢ່າງເດັ່ນສັດຢູ່ໃນເລື່ອງສິນໄຊ. ເມື່ອສິນໄຊຫຼານຄີງຂອງນາງ ນຳໄປຊອກຫາ ແລະ ເອົານາງ ກັບຄືນໄປເມືອງເປັງຈານ, ນາງ ບໍ່ຢາກກັບໄປຍ້ອນວ່ານາງຮັກສາມີ ແລະ ບໍ່ຢາກພັດພາກຈາກກັນໄປຢ່າງໄຮ້ພົມແດນ, ເມື່ອບໍ່ຢາກພັດພາກຈາກນັ້ນນາງຈຶ່ງຫາທຸກວິທີໄດ້ຢູ່ໃກ້ສິດສາມີ ແລະຢາກໃຫ້ສາມີຕໍ່ສູ້ເອົາຕົນເອງກັບມາໃນອີກຂອງສາມີເໝືອນເດີມ.

ອີກປະການໜຶ່ງຕອນຍັກກຸມພັນສະຫວັນນະຄົດ ນາງກໍຮ້ອງໄຫ້ເກືອກກິ້ວກັບຊາກສົບຂອງສາມີ ແລະ ບໍ່ຄິດວ່າສາມີເປັນຍັກ, ມີຮູບຮ່າງຂີ້ຮ້າຍ, ສາບຄາວເໝືອນເວລາເບື້ອງຕົ້ນອີກ. ຕໍ່ມານາງ ກໍຮ້ອງຂໍສິນໄຊຜູ້ເປັນຫຼານເພື່ອທຳພິທີສົ່ງສະການຢ່າງສົມກຽດ.

ບັນຫານີ້ໄດ້ຢັ້ງຢືນໃຫ້ເຮົາເຫັນວ່າ: ນາງ ສຸມຸນທາຮັກກຸມພັນຢ່າງສຸດໃຈ ແລະ ບໍ່ມີພົມແດນຮູບຂອງຍັກກຸມພັນຢືນຢັນຕິດພັນກັບຈິດໃຈຂອງນາງຊື່ອນີລັນ. ຕະຫຼອດເວລານາງຖືວ່າກຸມພັນເປັນຍອດສັບພັນຍູຂອງນາງເພາະກຸມພັນໄດ້ຮັກ ແລະ ຖະນອມນາງເໝືອນແກ້ວຕາດວງໃຈ, ມົດບໍ່ໃຫ້ໄຕ່ໄຮບໍ່ໃຫ້ຕອມຕະຫຼອດທີ່ນາງ ແລະ ກຸມພັນຢູ່ຮ່ວມກັນເປັນຜົວເມຍກໍມີແຕ່ຄວາມອົບອຸ່ນສະໜຸກສະບາຍທັງກາຍ ແລະ ໃຈ. ສະນັ້ນ, ນາງຈຶ່ງຖືວ່າກຸມພັນເປັນສາມີທີ່ດີ; ໃນເມື່ອນາງຖືກແຍກຕົວອອກຈາກກັນໂດຍບັງຄັບນັ້ນນາງຈຶ່ງຖືວ່າເປັນການມ້າງເພຄວາມຮັກຂອງນາງ. ເຖິງວ່ານາງເປັນສະຕີເຊື້ອກະສັດຄວນຈະໄດ້ສາມີເປັນກະສັດ, ແຕ່ນາງ ກັບໄປໄດ້ສາມີເປັນຍັກເປັນມານທີ່ກົງກັນຂ້າມກັບຕົນເອງ, ແຕ່ຖ້າຈະຕີລາຄາໃນແງ່ທຳມະສາສະໜາຖືວ່ານາງມີເຄາະຮ້າຍ ຫຼື ໂຊກຊາຕາການບໍ່ດີໄດ້ສາມີກໍບໍ່ໄດ້ແຕ່ງດອງ, ແຕ່ຖ້າຕີລາຄາໃນແງ່ຄວາມເຊື່ອຖືກໍຍ້ອນກົກມີ່ງກົກແນນກ້ຽວກັນມາແຕ່ກຳເນີດ, ຄົນເຮົາເລືອກເກີດ ແລະ ເລືອກຮັກບໍ່ໄດ້ຄືກັນໝົດທຸກຄົນ, ສະນັ້ນ, ຄວາມຮັກຂອງນາງ ສຸມຸນທາຈຶ່ງຖືວ່າເປັນຄວາມຮັກທີ່ບໍ່ມີພົມແດນ, ຄວາມຮັກເກີດຂຶ້ນຈາກການໃກ້ສິດຢ່າງອົບອຸ່ນ ເກີດຈາກຈິດໃຈທີ່ແທ້ຈິງບໍ່ແມ່ນຍ້ອນບຸນວາດສະໜາຊາຕາຫຍັງທັງໝົດ.

**ງ. ຕົວລະຄອນປະກອບ** (5 ນາທີ)

ນອກຈາກຕົວລະຄອນເອກ ແລະ ຕົວລະຄອນໃຈກາງແລ້ວໃນໜັງສືເລື່ອງ “ສິນໄຊ” ຍັງມີຕົວລະຄອນປະກອບຫຼາຍຕົວລະຄອນອີກດ້ວຍ. ຕົວລະຄອນສີໂຫ, ສັງທອງ, ພະອິນ, ພະຍານາກ ແລະ ອື່ນໆ. ບັນຫາຕົວລະຄອນປະກອບເຫຼົ່ານີ້ລ້ວນແຕ່ເປັນຜູ້ຊຸກຍູ້ໃຫ້ຕົວລະຄອນເອກປະຕິບັດໜ້າທີ່ໃຫ້ສຳເລັດໄປຕາມແຕ່ລະຕອນຂອງເລື່ອງແຕ່ຕົ້ນຕະຫຼອດປາຍ (ສົມທະເພີຍ ສີວົງສັກ ແລະອຳໄພ ສອນທະລາ, 2019).

**III. ຂັ້ນສະຫຼຸບ**

- **ຄູເນັ້ນຈຸດສຳຄັນຂອງບົດຮຽນ**
- ການວິເຄາະຕົວລະຄອນໃນເລື່ອງ “ສິນໄຊ”

**IV. ວັດ ແລະ ປະເມີນ**

- ຄູຖາມຂໍ້ຂ້ອງໃຈຂອງນັກຮຽນ (ຖ້າມີ) ຄູອະທິບາຍຄືນ
- ຄູຕັ້ງຄຳຖາມ: ແຕ່ລະຂໍ້ຂອງບົດຮຽນ

- ໃຫ້ນັກຮຽນຕອບ 1-2 ຄົນ
- ຄູສັງເກດຄຳຕອບ ແລະ ສະຫຼຸບຄືນ

- **ຂັ້ນຕັກເຕືອນ**
  - ຄູແນະນຳນັກຮຽນອ່ານບົດຮຽນໃໝ່
  - ສຶກສາແນວຄິດຂອງຜູ້ຮຽນ
  - ມອບວຽກບ້ານ

**ເອກະສານອ້າງອີງ**

ສົມທະເພີຍ ສີວົງສັກ ແລະ ອຳໄພ ສອນທະລາ. (2019). ວັນນະຄະດີລ້ານຊ້າງ. ຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ.

ສີລາ ວີຣະວົງ (ພສ. 2512) ສັງສິນໄຊ. ວັນນະຄະດີຄຳກອນຊັ້ນຍອດຂອງລາວ. ກະຊວງທຳມະການ.

ຄູສອນປະຈຳວິຊາ



ປທ.ສົມທະເພີຍ ສີວົງສັກ